ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0827 /ກປ

ນະຄອນຫຼວງວຽງຈັນ, ວັນທີ 05/04/18

# ຄຳສັ່ງ

## ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດ ຕໍ່ການສະກັດກັ້ນ, ເຝົ້າລະວັງ ແລະ ກຳຈັດ ການລະບາດຂອງພະຍາດຫ່ຽວເຫຼືອງກ້ວຍ

ເຖິງ:
- ທ່ານ ຫົວໜ້າຫ້ອງການ, ບັນດາກົມ ແລະ ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້.
- ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ.
- ທ່ານ ຫົວໜ້າດ່ານສາກົນ ດ່ານທ້ອງຖິ່ນ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມ ໜັງສືສະເໜີ ຂອງກົມປູກຝັງ ເລກທີ 0178/ກປຝ, ລົງວັນທີ 26 ມັງກອນ 2018.

ໃນໄລຍະຜ່ານມາ ການປູກກ້ວຍຂອງຊາວກະສິກອນ, ບັນດາຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ໂດຍສະເພາະແມ່ນການປູກກ້ວຍຫອມຈັນ (Cavendish) ຢູ່ບັນດາແຂວງພາກເໜືອ ເຊັ່ນ: ແຂວງ ຜົ້ງສາລີ, ແຂວງ ຫຼວງນ້ຳທາ, ແຂວງ ບໍ່ແກ້ວ, ແຂວງ ອຸດົມໄຊ, ແຂວງ ໄຊຍະບູລີ. ອີກຈຳນວນໜຶ່ງຢູ່ທາງພາກກາງ ແລະ ພາກໃຕ້ ເຊັ່ນ: ແຂວງ ວຽງຈັນ, ແຂວງ ສາລະວັນ ແລະ ແຂວງ ອັດຕະປື ເຊິ່ງມີເນື້ອທີ່ທັງໝົດ 23.000 ກວ່າເຮັກຕາ; ໄປຄຽງຄູ່ກັບຂະບວນການດັ່ງກ່າວ, ກໍ່ເກີດມີການລະບາດຂອງພະຍາດຫ່ຽວເຫຼືອງກ້ວຍ (Fusarium wilt, TR4), ຢູ່ບາງເຂດ ເຊັ່ນ: ໃນຊ່ວງປີ 2016-2017 ນີ້, ທີມງານວິຊາການສູນປ້ອງກັນພືດ, ໄດ້ລົງສຳຫຼວດ ແລະ ໄດ້ພົບເຫັນການລະບາດຂອງພະຍາດດັ່ງກ່າວ ຢູ່ສວນປູກຂອງບັນດາບໍລິສັດທີ່ມາລົງທຶນ ໃນ 3 ແຂວງ ຄື: ແຂວງ ບໍ່ແກ້ວ (ເມືອງ ຫ້ວຍຊາຍ ແລະ ເມືອງ ຕົ້ນເຜິ້ງ); ຢູ່ແຂວງ ຫຼວງນ້ຳທາ (ເມືອງ ນ້ຳທາ, ເມືອງ ສິງ ແລະ ເມືອງ ລອງ) ແລະ ຢູ່ແຂວງ ວຽງຈັນ (ເມືອງ ວັງວຽງ) ພະຍາດຫ່ຽວເຫຼືອງກ້ວຍນີ້, ມີຄວາມທົນຕໍ່ສະພາບແວດລ້ອມ ສາມາດພັກຕົວຢູ່ໃນດິນໄດ້ນານກວ່າ 30 ປີ.

ພະຍາດດັ່ງກ່າວນີ້, ບໍ່ພຽງແຕ່ເກີດກັບຊະນິດພັນກ້ວຍຫອມຈີນ ເທົ່ານັ້ນ, ແຕ່ຍັງສາມາດຕິດຕໍ່ໄປສູ່ແນວພັນກ້ວຍພື້ນເມືອງອື່ນໆໄດ້ອີກ ເຊັ່ນ: ກ້ວຍນໍ້າ, ກ້ວຍເລັບມືນາງ....ນອກນັ້ນ, ພືດອື່ນໆ ເຊັ່ນ: ໄມ້ປະດັບຕະກູນ Heliconia ແລະ ປະເພດຫຍ້າກໍສາມາດຕິດພະຍາດນີ້ໄດ້. ເຊື້ອພະຍາດນີ້, ຈະເຂົ້າທຳລາຍລະບົບຮາກ, ເຮັດໃຫ້ຮາກ ແລະ ເຫງົ້າເນົ່າ. ຈາກນັ້ນ, ຈະໄປທຳລາຍລະບົບທໍ່ລຳລຽງນໍ້າ, ທໍ່ລຳລຽງອາຫານ ເຮັດໃຫ້ໃບຫ່ຽວ, ມີສີເຫຼືອງ, ຂອບໃບແຫ້ງ, ຕົ້ນກ້ວຍທີ່ຕິດພະຍາດນີ້ ຈະໃຫ້ຜົນຜະລິດໜ້ອຍລົງ, ໝາກລີບ...

ເພື່ອເປັນການປ້ອງກັນ, ສະກັດກັ້ນ ແລະ ຄວບຄຸມການແຜ່ລະບາດຂອງພະຍາດພືດດັ່ງກ່າວ, ບໍ່ໃຫ້ແຜ່ຂະຫຍາຍໄປສູ່ເຂດອື່ນ

**ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:**

1. ໃຫ້ ກົມປູກຝັງ ຮີບຮ້ອນປະສານສົມທົບ ກັບພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ, ດ່ານກັກກັນພືດ ແລະ ອົງການປົກຄອງທ້ອງຖິ່ນກ່ຽວຂ້ອງ ເພີ່ມທະວີຄວາມເຂັ້ມງວດ ໃນການສະກັດກັ້ນ, ເຝົ້າລະວັງ ແລະ ກຳຈັດ ພະຍາດຫ່ຽວເຫຼືອງກ້ວຍ ຕາມມາດຕະການທີ່ຈຳເປັນຮີບດ່ວນດັ່ງນີ້:

ກ. ສຳລັບມາດຕະການລວມ ໃຫ້ເອົາໃຈໃສ່ ດັ່ງນີ້:

1. ໃຫ້ເຈົ້າໜ້າທີ່ກັກກັນພືດ ຕາມດ່ານຊາຍແດນຕ່າງໆ ເພີ່ມທະວີຄວາມເຂັ້ມງວດກວດກາການນຳເຂົ້າແນວພັນ ແລະ ໜໍ່ພັນກ້ວຍ; ກວດກາໃບຢັ້ງຢືນສຸຂານາໄມພືດ ທີ່ອອກໃຫ້ໂດຍອົງການປ້ອງກັນພືດແຫ່ງຊາດຂອງປະເທດຕົ້ນທາງ (ປະເທດສົ່ງອອກ); ຖ້າບໍ່ມີໃບຢັ້ງຢືນສຸຂານາໄມພືດ ແມ່ນຫ້າມນຳເຂົ້າ ຢ່າງເດັດຂາດ;
2. ຫ້າມທຸກການເຄື່ອນຍ້າຍໜໍ່ພັນກ້ວຍ ແລະ ດິນ ຈາກພື້ນທີ່ທີ່ມີການລະບາດຂອງພະຍາດດັ່ງກ່າວ ເຊັ່ນ: ພື້ນທີ່ທີ່ພົບເຫັນການລະບາດ ຢູ່ແຂວງ ບໍ່ແກ້ວ, ແຂວງ ຫຼວງນໍ້າທາ, ແຂວງ ວຽງຈັນ ເຊິ່ງມີຄວາມສ່ຽງສູງທີ່ຈະຕິດຕໍ່ໄປສູ່ເຂດອື່ນ.

ຂ. ມາດຕະການສະເພາະ ໃນເຂດທີ່ມີການລະບາດ ໃຫ້ປະຕິບັດ ດັ່ງນີ້:

1. ພື້ນທີ່ທີ່ມີການລະບາດຂອງພະຍາດຫ່ຽວເຫຼືອງກ້ວຍ ແມ່ນບໍ່ອະນຸຍາດໃຫ້ປູກກ້ວຍຊໍ້າຄືນ ໃສ່ໃນເຂດດັ່ງກ່າວອີກ;
2. ໃຫ້ທຳຄວາມສະອາດ ໂດຍການຂຸດໜໍ່ ຫຼື ເຫງົ້າກ້ວຍ ມາທຳລາຍຖິ້ມ; ໃຫ້ໄຖດິນຕາກແດດໄວ້ໄລຍະໜຶ່ງ ແລ້ວຈຶ່ງປູກພືດອື່ນທົດແທນການປູກກ້ວຍ;
3. ບຸກຄົນທີ່ເຮັດວຽກໃນສວນກ້ວຍ, ອຸປະກອນຮັບໃຊ້ໃນການກຽມດິນ, ເຄື່ອງມືອື່ນໆ ທີ່ນຳໃຊ້ໃນເຂດພື້ນທີ່ພົບການລະບາດພະຍາດຫ່ຽວເຫຼືອງກ້ວຍ (Fusarium wilt, TR4) ຕ້ອງອະນາໄມ້ດ້ວຍຢາຂ້າເຊື້ອກ່ອນຈະນຳເອົາໄປໃຊ້ໃນພື້ນທີ່ອື່ນ.